# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ........................................... ໜ້າ 01 – 07

II. ການເຄື່ອນໄຫວວຽກງານ ຂອງການນໍາພັກ ປປ ລາວ...................................... ໜ້າ 08 - 10

III. ການເຄື່ອນໄຫວຂອງຄະນະນໍາ ຄະນະພົວພັນຕ່າງປະເທດສູນກາງພັກ...................... ໜ້າ 11 – 15

IV. ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຄຕພ........................................ ໜ້າ 16


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈໍາເດືອນ **ທັນວາ 2021**


**ສໍານັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຢູ່ ສປປ ລາວ

### 1) ສະຖານະການໂຄວິດ-19

ພະຍາດໂຄວິດ-19 ຢູ່ ສປປ ລາວ ຍັງສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ, ເຊິ່ງຜູ້ຕິດເຊື້ອສ່ວນໃຫຍ່ ມີອາການເບົາບາງ ແລະ ໄດ້ຮັບອະນຸຍາດໃຫ້ຕິດຕາມ ແລະ ປິ່ນປົວຢູ່ເຮືອນ. ເວົ້າລວມແລ້ວ, ປັດຈຸບັນ, ປະຊາຊົນລາວ ໄດ້ປັບໂຕ ໃຫ້ສາມາດດຳລົງຊີວິດປົກກະຕິແບບໃໝ່ໄດ້. ຮອດວັນທີ 31 ທັນວາ 2021, ທົ່ວປະເທດ ມີຜູ້ຕິດເຊື້ອສະສົມ 111,060 ເພີ່ມຂຶ້ນ 61,387 ຄົນ; ປິ່ນປົວຫາຍດີ 102,000 ຄົນ ເພີ່ມຂຶ້ນ 41,151 ຄົນ; ກຳລັງປິ່ນປົວຢູ່ໂຮງໝໍ 9,060 ຄົນ, ເສຍຊີວິດສະສົມທັງໝົດ 372 ຄົນ ເພີ່ມຂຶ້ນ 206 ຄົນ ຖ້າທຽບໃສ່ເດືອນຜ່ານມາ; ຂະນະດຽວກັນ, ປະຊາຊົນລາວ ຍັງເຫັນໄດ້ຄວາມສຳຄັນຂອງການສັກວັກແຊງຕ້ານພະຍາດດັ່ງກ່າວ, ຮອດວັນທີ 31 ທັນວາ 2021, ຜູ້ທີ່ໄດ້ສັກວັກແຊງຄົບ 2 ເຂັມ ມີ 3,617,440 ຄົນ (49,30%), ໄດ້ສັກເຂັມທີໜຶ່ງ 4,576,767 ຄົນ (62,37%).

### 2) ປະທານສະພາແຫ່ງຊາດລາວ ຢ້ຽມຢາມສັນຖະວະໄມຕີ ສສ ຫວຽດນາມ

ວັນທີ 08/12/2021, ສະຫາຍ ໄຊສົມພອນ ພົມວິຫານ, ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແລະ ຄະນະຜູ້ແທນຂັ້ນສູງ ຂອງສະພາແຫ່ງຊາດ ໄດ້ສຳເລັດການຢ້ຽມຢາມສັນຖະວະໄມຕີ ສສ ຫວຽດນາມ. ໃນການຢ້ຽມຢາມຄັ້ງນີ້, ສະຫາຍປະທານສະພາແຫ່ງຊາດ ໄດ້ເຂົ້າຢ້ຽມຂ່ຳນັບບັນດາການນຳຂັ້ນສູງພັກ-ລັດ ແຫ່ງ ສສ ຫວຽດນາມ ເປັນຕົ້ນ: ຢ້ຽມຂ່ຳນັບ ສະຫາຍ ຫງວຽນ ຟູ ຈ້ອງ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ; ສະຫາຍ ຫງວຽນ ຊວນ ຟຸກ ກຳມະການກົມການເມືອງສູນກາງພັກ, ປະທານປະເທດ ແຫ່ງ ສສ ຫວຽດນາມ; ຢ້ຽມຢາມພົບປະ ສະຫາຍ ຟາມ ມິງ ຈິງ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແຫ່ງ ສສ ຫວຽດນາມ. ພ້ອມກັນນັ້ນ, ໄດ້ພົບປະສອງຝ່າຍ ກັບສະຫາຍ ເວືອງ ດິງ ເຫວະ, ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສສ ຫວຽນາມ ດ້ວຍບັນຍາກາດແຫ່ງໄມຕີຈິດມິດຕະພາບອັນອົບອຸ່ນ, ສະໜິດສະໜົມຖານສະຫາຍອ້າຍນ້ອງ. ສອງຝ່າຍໄດ້ຕີລາຄາຄືນການພົວພັນຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດຂອງສອງປະເທດ ໃນໄລຍະຜ່ານມາ ແລະ ປຶກສາຫາລືທິດທາງແຜນການໃນຕໍ່ໜ້າ ເປັນຕົ້ນແມ່ນການປັບປຸງບົດບັນທຶກການຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດ ຊຶ່ງຈະໝົດອາຍຸໃນປີ 2022, ການສ້າງກິດຈະກຳສະເຫຼີມສະຫຼອງ ສອງວັນປະຫວັດສາດ ແລະ ປີສາມັກຄີມິດຕະພາບ ລາວ-ຫວຽດນາມ ໃນປີ 2022; ສືບຕໍ່ການພົວພັນຮ່ວມມືແລກປ່ຽນຄະນະຜູ້ແທນ, ຄະນະມິດຕະພາບ ແລະ ສະມາຊິກສະພາແຫ່ງຊາດ (ສສຊ) ໜຸ່ມ, ແລກປ່ຽນ ສສຊ ເພດຍິງ, ແລກປ່ຽນຈັດຕັ້ງກອງປະຊຸມສຳມະນາໃນຫົວຂໍ້ວິທະຍາສາດຮ່ວມກັນ, ຊຸກຍູ້ການພົວພັນຮ່ວມມືລະຫວ່າງ ສອງລັດຖະບານ, ປະສານສົມທົບຮ່ວມກັນຕິດຕາມກວດກາບັນດາໂຄງການຮ່ວມມືຕ່າງໆ, ການຮ່ວມມື ໃນເວທີພາກພື້ນ ແລະ ສາກົນ ເປັນຕົ້ນ AIPA, IPU, APPF, ASEP, CLV ແລະອື່ນໆ. ການຢ້ຽມຢາມຄັ້ງນີ້ ຍັງເປັນການຮັດແໜ້ນ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ກໍຄື ສອງສະພາແຫ່ງຊາດ ລາວ ແລະ ຫວຽດນາມ ໃຫ້ແໜ້ນແຟ້ນ ແລະ ເກີດດອກອອກຜົນງົດງາມຍິ່ງໆຂຶ້ນ.

## 2. ສະພາບການພາກພື້ນ ແລະ ສາກົນ

### 1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ

ຕົວເລກຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ຍັງຄົງມີທ່າອ່ຽງເພີ່ມສູງຂຶ້ນເລື້ອຍໆ, ເຊິ່ງອົງການອະນາໄມໂລກ (WHO) ໄດ້ກ່າວເຕືອນວ່າ "ຄື້ນສຸນາມິ" ຂອງໂຄວິດ-19 ໄດ້ຂົ່ມຂູ່ລະບົບສາທາລະນະສຸກໃນທົ່ວໂລກ; ຫຼາຍກວ່າ 85% ຂອງການຕິດເຊື້ອໃຫມ່ ໃນເຂດເອີລົບ ແລະ ອາເມລິກາ ແມ່ນສາຍພັນ Omicron. WHO ກ່າວເຕືອນຕື່ມວ່າ

ປະເທດຕ່າງໆ ບໍ່ຄວນຫຼຸດຜ່ອນມາດຕະການປ້ອງກັນ COVID-19 ແລະ ເວລາຂອງການກັກໂຕ, ເຖິງແມ່ນວ່າ ສາຍພັນ Omicron ຈະບໍ່ຮຸນແຮງກວ່າ ສາຍພັນທີ່ຜ່ານມາ ກໍຕາມ. ຮອດວັນທີ 31 ທັນວາ 2021, ຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ມີ 286.742.426 ຄົນ, ເສຍຊີວິດ 5.445.241 ຄົນ ແລະ ປິ່ນປົວຫາຍດີ 253.096.523 ຄົນ. ສະຫະລັດ ຍັງຄົງເປັນປະເທດທີ່ໄດ້ຮັບຜົນກະທົບຮ້າຍແຮງທີ່ສຸດໃນໂລກ, ຈຳນວນຜູ້ຕິດເຊື້ອທັງໝົດ ແມ່ນ 54.098.854 ຄົນ, ເສຍຊີວິດ 841.698 ຄົນ. ອິນເດຍ ເປັນອັນດັບ 2 ຂອງໂລກ, ຜູ້ຕິດເຊື້ອທັງໝົດ 34.808.067 ຄົນ, ເສຍຊີວິດ 480.320 ຄົນ, ເບຣຊິນ ເປັນອັນດັບສາມ ທີ່ມີ ຜູ້ຕິດເຊື້ອ 22.254.706 ຄົນ ແລະ ເສຍຊີວິດ 618.705 ຄົນ.

**2) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ**

- ວັນທີ 06/12/2021, ສານມຽນມາ ໄດ້ຕັດສິນລົງໂທດຈຳຄຸກ ທ່ານ ນາງ ອອງຊານ ຊູຈີ, ອະດີດທີ່ປຶກສາແຫ່ງລັດ ແລະ ທ່ານ Win myint, ອະດີດປະທານາທິບໍດີ ມຽນມາ ເປັນເວລາ 04 ປີ, ແຕ່ ທ່ານ ມິອ ມິນ ອອງລາຍ, ຜູ້ບັນຊາການທະຫານສູງສຸດມຽນມາ,ຜູ້ນຳຂອງມຽນມາໃນປັດຈຸບັນ ໄດ້ອະໄພຍະໂທດໃຫ້ເຫຼືອ 02 ປີ. ທັງສອງທ່ານ ຖືກຕັດສິນຈຳຄຸກໃນຂໍ້ຫາ ປຸກລະດົມ ແລະ ລະເມີດມາດຕະການຄວບຄຸມ, ປ້ອງກັນ ການແຜ່ລະບາດຂອງພະຍາດໂຄວິດ - 19 ໃນລະຫວ່າງການຫາສຽງເລືອກຕັ້ງປີ 2020. ຂະນະດຽວກັນ, ສະພາສິດທິມະນຸດ ສປຊ, ສະຫະລັດອາເມລິກາ, ອັງກິດ ແລະ ສະຫະພາບເອີລົບ ໄດ້ປະນາມການຕັດສິນດັ່ງກ່າວ ແລະ ຮຽກຮ້ອງໃຫ້ກອງທັບມຽນມາ ເປີດກວ້າງປະຊາທິປະໄຕ ແລະ ເສລີພາບຂອງ ປະຊາຊົນ. ພ້ອມນັ້ນ, ອາເມລິກາ ຍັງກ່າວວ່າ: ກຳປູເຈຍ ທີ່ຈະເປັນປະທານອາຊຽນໃນປີ 2022 ຈະຍຶດໝັ້ນໃນມະຕິ 05 ຂໍ້ ຂອງອາຊຽນ ກ່ຽວກັບການແກ້ໄຂບັນຫາໃນມຽນມາ. ລັດຖະບານທະຫານມຽນມາ ໄດ້ຕອບໂຕ້ວ່າ ການສະແດງອອກດັ່ງກ່າວ ເປັນການແຊກແຊງຂະບວນການຍຸດຕິທຳ ແລະ ກິດຈະການພາຍໃນຂອງມຽນມາ, ອາເມລິກາ ແລະ ພັນທະມິດ ຄວນຢຸດຕິການເຂົ້າແຊກແຊງປະເທດອື່ນ.

- ວັນທີ 07/12/2021, ທ່ານ Wunna Muang Lwin, ລັດຖະມົນຕີຕ່າງປະເທດ ມຽນມາ (ລັດຖະບານທະຫານ) ໄດ້ຢ້ຽມຢາມກຳປູເຈຍ ແລະ ເຂົ້າພົບ ທ່ານ ສົມເດັດ ຮຸນ ເຊັນ, ນາຍົກລັດຖະມົນຕີ, ແລະ ພົບປະ ກັບທ່ານ Prak Sokhonn, ລັດຖະມົນຕີຕ່າງປະເທດ ກຳປູເຈຍ. ສອງຝ່າຍ ໄດ້ປຶກສາຫາລືກ່ຽວກັບສາຍພົວພັນຮ່ວມມືຂອງສອງປະເທດ, ບັນຫາໃນ ASEAN, ຫາວິທີທາງປັບປຸງສາຍພົວພັນທີ່ດີລະຫວ່າງ ມຽນມາ - ASEAN ຄືນໃໝ່, ສອງຝ່າຍຍັງເຫັນດີເພີ່ມທະວີການຮ່ວມມືທາງດ້ານການຄ້າ, ເສດຖະກິດ ແລະ ການໄປມາຫາສູ່ຂອງປະຊົນສອງປະເທດ. ກຳປູເຈຍ ສັນຍາວ່າ ຈະຮ່ວມມືກັບບັນດາປະເທດສະມາຊິກອາຊຽນ ແກ້ໄຂບັນຫາ ມຽນມາ ຢ່າງຍຸດຕິທຳ ແລະ ວັນທີ 15/12/2021, ກຳປູເຈຍ ໄດ້ແຕ່ງຕັ້ງທ່ານ Prak sokhonn, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີຕ່າງປະເທດກຳປູເຈຍ ເປັນທູດພິເສດຂອງອາຊຽນປະຈຳມຽນມາ. ພ້ອມກັນນັ້ນ, ທ່ານ ສົມເດັດ ຮຸນ ເຊັນ ຍັງຕອບຮັບຄຳເຊື້ອເຊີນ ຈະໄປຢ້ຽມຢາມ ມຽນມາ ໃນວັນທີ 7-8/01/2022 ເຊິ່ງຈະເຮັດໃຫ້ ກຳປູເຈຍເປັນປະເທດທຳອິດ ທີ່ສົ່ງຜູ້ນຳປະເທດ ຢ້ຽມຢາມມຽນມາ.

- ວັນທີ 24/12/2021, ລັດຖະບານຍີ່ປຸ່ນ ອະນຸມັດແຜນງົບປະມານຮັບໃຊ້ເຂົ້າໃນວຽກງານພັດທະນາກອງທັບຍີ່ປຸ່ນມູນຄ່າ 47 ຕື້ໂດລາສະຫະລັດໃນ ປີ 2022, ທຽບໃສ່ປີ 2021 ເພີ່ມຂຶ້ນ 510 ລ້ານໂດລາ. ໃນນັ້ນ, 2,8 ຕື້ໂດລາ ຈະນຳໃຊ້ເຂົ້າໃນການສ້າງສະໜາມບິນຮົບ ທີ່ເກາະ Mageshima, ແຂວງ Kagoshima ເພື່ອສ້າງຖານທັບປ້ອງກັນຕົນເອງ ແລະ ເປັນບ່ອນຊ້ອມຮົບ. ພ້ອມກັນນັ້ນ, ຍີ່ປຸ່ນຍັງເຫັນດີເພີ່ມງົບປະມານໃຊ້ຈ່າຍໃຫ້ທະຫານອາເມລິກາ ທີ່ມາປະຈຳການຢູ່ຍີ່ປຸ່ນ ມູນຄ່າ 9,3 ຕື້ໂດລາສະຫະລັດ ໃນໄລຍະເວລາ 05 ປີ.

- ວັນທີ 13-15/12/2021, ທ່ານ Antony Blinken, ລັດຖະມົນຕີຕ່າງປະເທດອາເມລິກາ ໄດ້ຢ້ຽມຢາມ ແລະ ເຮັດວຽກ ຢູ່ປະເທດ ອິນໂດເນເຊຍ ແລະ ມາເລເຊຍ ຕາມລຳດັບ. ທ່ານ Antony Blinken ໄດ້ສະແດງຄວາມໝາຍໝັ້ນຢ່າງແຂງແຮງເພື່ອຮ່ວມມືທາງດ້ານພື້ນຖານໂຄງລ່າງ ແລະ ເສດຖະກິດກັບ ອິນໂດເນເຊຍ ແລະ ໄດ້ສະໜັບສະໜູນອິນໂດເນເຊຍໃຫ້ເປັນຜູ້ນຳໃນຂົງເຂດອິນໂດ - ປາຊີຟິກ ໂດຍການເປັນປະເທດທີ່ມີປະຊາທິປະໄຕໃຫຍ່ທີ່ສຸດອັນດັບສາມ ແລະ ເປັນປະເທດທີ່ສະໜັບສະໜູນຢ່າງແຂງແຮງຕໍ່ລະບຽບການສາກົນ. ຂະນະທີ່ ອິນໂດເນເຊຍ ໄດ້ສະ

ເໜີໃຫ້ ອາເມລິກາ ເພີ່ມທະວີການລົງທຶນ ໃນປະເທດອາຊີຕາເວັນອອກສ່ຽງໃຕ້ ເພື່ອເພີ່ມທະວີການພົວພັນຮ່ວມມື ກັບພາກພື້ນ ແລະ ອິນໂດເນເຊຍ ເຕັມໃຈທີ່ຈະເສີມຂະຫຍາຍສາຍພົວພັນ ແລະ ຄູ່ຮ່ວມມືທີ່ດີກັບທັງສອງປະເທດ ອາເມລິກາ ແລະ ລັດເຊຍ ເພື່ອພັດທະນາປະເທດ ແບບຕ່າງຝ່າຍຕ່າງມີຜົນປະໂຫຍດ. ໃນການຢ້ຽມຢາມມາເລເຊຍ, ທ່ານ Antony Blinken ໄດ້ພົບປະກັບຄູ່ຮ່ວມຕຳແໜ່ງ ທ່ານ Sai Fuddin Abdullah ແລະ ປຶກສາຫາລືກ່ຽວກັບ ການແກ້ໄຂບັນຫາມຽນມາ ເພື່ອມອບຄືນອຳນາດໃຫ້ແກ່ປະຊາຊົນມຽນມາ, ເສີມຂະຫຍາຍສາຍພົວພັນທາງດ້ານການ ທະຫານ ແລະ ເສດຖະກິດ ລະຫວ່າງສອງປະເທດ ມາເລເຊຍ-ອາເມລິກາ. ທ່ານ Antony Blinken, ມີຄຳເຫັນວ່າ 10 ປະເທດສະມາຊິກອາຊຽນ ເປັນອົງປະກອບທີ່ສຳຄັນ ຂອງພາກພື້ນ ອິນໂດ - ປາຊີຟິກ.

- ວັນທີ 06/12/2021, ທ່ານ ວາລາດີເມຍ ປູຕິນ, ປະທານາທິບໍດີ ລັດເຊຍ ໄດ້ພົບປະກັບ ທ່ານ ນາເຣັນດຣາ ໂມດີ, ນາຍົກລັດຖະມົນຕີອິນເດຍ ໃນກອງປະຊຸມສຸດຍອດປະຈຳປີ ຄັ້ງທີ 21 ຂອງສອງປະເທດ ທີ່ ອິນເດຍ. ສອງ ຝ່າຍໄດ້ຕົກລົງເຫັນດີຍົກລະດັບການຮ່ວມມືທາງການທະຫານ, ການເມືອງ, ວິທະຍາສາດ, ເຕັກໂນໂລຊີ ແລະ ອື່ນໆ, ໃນນັ້ນ, ສອງຝ່າຍໄດ້ລົງນາມໃນຂໍ້ຕົກລົງ ແລະ ບົດບັນທຶກຊ່ວຍຈຳ ທັງໝົດ 28 ສະບັບ ເຊັ່ນ: ການຮ່ວມມືຜະລິດ ເຫຼັກ, ການຕໍ່ເຮືອ, ຖ່ານຫີນ, ພະລັງງານ, ນ້ຳມັນ, ການປະຕິບັດສັນຍາລະບົບລູກສອນໄຟປ້ອງກັນທາງອາກາດ S400, ການຮ່ວມມື 10 ປີ ຂອງສອງກອງທັບ, ການປົກປ້ອງຊັບສິນທາງປັນຍາ ແລະ ເຕັກໂນໂລຊີ, ການຕອບໂຕ້ ການໂຈມຕີທາງອິນເຕີເນັດ ແລະ ອື່ນໆ. ສອງຝ່າຍ ຍັງໄດ້ອອກຖະແຫຼງການຮ່ວມ ໂດຍຮຽກຮ້ອງໃຫ້ມີການປະຕິຮູບ ຮອບດ້ານກ່ຽວກັບ ສະພາຄວາມໝັ້ນຄົງສະຫະປະຊາຊາດ (UNSC). ພ້ອມກັນນັ້ນ, ສອງຝ່າຍຍັງໄດ້ແລກປ່ຽນຄຳຄິດ ເຫັນກ່ຽວກັບບັນຫາພາກພື້ນ ແລະ ສາກົນ ໂດຍສະເພາະ ແມ່ນສະພາບການໃນອັບຟະການິດສະຖານ ແລະ ເນັ້ນໜັກ ເຖິງຄວາມສຳຄັນໃນການຮ່ວມມື ແບບຕ່າງຝ່າຍຕ່າງມີຜົນປະໂຫຍດ ຕາມກົດໝາຍສາກົນ, ເຄົາລົບອະທິປະໄຕ, ບໍ່ ແຊກແຊງເຂົ້າກິນຈະການພາຍໃນຂອງກັນ ແລະ ກັນ.

### 3) ສະພາບການ ໃນຂົງເຂດເອີລົບ-ອາເມລິກາ

- ວັນທີ 07/12/2021, ທ່ານ ໂຈ ໄບເດິນ, ປະທານາທິບໍດີ ອາເມລິກາ ໄດ້ພົບປະທາງໄກກັບ ທ່ານ ວາລາ ດີເມຍ ປູຕິນ, ປະທານາທິບໍດີລັດເຊຍ ເພື່ອປຶກສາຫາລືກ່ຽວກັບຄວາມເຄັ່ງຕຶງຢູ່ ອູແກຼນ, ບັນຫາອິຣານ ແລະ ອື່ນໆ. ທ່ານ ໂຈ ໄບເດິນ ແລະ ພັນທະມິດ ໄດ້ສະແດງຄວາມກັງວົນຕໍ່ລັດເຊຍ ທີ່ໄດ້ເຄື່ອນທັບເຂົ້າໃກ້ຊາຍແດນ ອູແກຼນ ແລະ ວ່າ ຈະໃຊ້ມາດຕະການລົງໂທດທາງດ້ານເສດຖະກິດ ເພື່ອເປັນຕອບໂຕ້ລັດເຊຍ. ການສະແດງອອກຂອງອາເມລິກາ ແລະ ພັນທະມິດດັ່ງກ່າວ ເປັນການສະໜັບສະໜູນ ອູແກຼນ ໃນການປົກປ້ອງອະທິປະໄຕ. ຂະນະດຽວກັນ, ທ່ານ ວາລາ ດີເມຍ ປູຕິນ ໄດ້ມີຄຳເຫັນໃຫ້ ອາເມລິກາ ຮັບປະກັນຈະບໍ່ສະໜັບສະໜູນທະຫານນາໂຕ ເຄື່ອນທັບເຂົ້າໃກ້ຊາຍແດນ ລັດເຊຍ ແລະ ອູແກຼນ, ແລະ ອູແກຼນໄດ້ລະເມີດ ສັນຍາ Minsk ເຊິ່ງເປັນການກະທຳທ້າທາຍຕໍ່ ເຂດລູຮັນ ແລະ ໂດ ເນຍສ໌. ເພື່ອຄວາມສະຫງົບໃນພາກພື້ນ, ອາເມລິກາ ແລະ ລັດເຊຍ ເຫັນດີສືບຕໍ່ໃຫ້ທີມງານປະສານງານກັນ ແລະ ປຶກສາຫາລືກ່ຽວກັບບັນຫາ ອູແກຼນ. ຂະນະທີ່ ທີ່ປຶກສາຂອງປະທານາບໍດີ ອູແກຼນ ໄດ້ມີຄຳເຫັນສະໜັບສະໜູນ ອາເມລິກາ ໃນການສົນທະນາກັບ ລັດເຊຍ, ຮຽກຮ້ອງໃຫ້ອາເມລິກາ ແລະ ລັດເຊຍ ສືບຕໍ່ເຈລະຈາທາງການທູດ ເພື່ອ ຫຼຸດຜ່ອນຄວາມເຄັ່ງຕຶງໃນເຂດດັ່ງກ່າວ ແລະ ຮັກສາຜົນປະໂຫຍດຂອງ ອູແກຼນ. ໃນຂະນະດຽວກັນ, ອູແກຣນ ໄດ້ ກ່າວວ່າ ອາເມລິກາ ຈະໃຫ້ເງິນ 20 ລ້ານໂດລາສະຫະລັດ ເພື່ອຊຸກຍູ້ຄວາມປອດໄພທາງຊາຍແດນຂອງຕົນ, ເຊິ່ງຄາດ ວ່າ ແຜນການດັ່ງກ່າວ ຈະໄດ້ຮັບການປະຕິບັດໃນ ເດືອນ ມັງກອນ ປີ 2022 ນີ້. ນອກຈາກນັ້ນ, ໃນວັນທີ 28 ທັນວາ 2021, ອາເມລິກາ ໄດ້ສັ່ງໃຫ້ເຮືອຮົບບັນທຸກເຮືອບິນ USS Harry S Truman ສືບຕໍ່ປະຈຳການຢູ່ທະເລເມດີເຕລະ ນຽນ ພາຍຫຼັງກ່ອນໜ້ານີ້ ກໍໄດ້ສຳເລັດການຊ້ອມຮົບຮ່ວມກັບກອງທັບ ຕູນີຊີ ເພື່ອກຽມຄວາມພ້ອມ ແລະ ຮັບປະກັນ ຄວາມໝັ້ນຄົງ ຂອງອູແກຼນ.

ສຳລັບການພິຈາລະນາຮັບເອົາ ອູແກຣນ ເປັນສະມາຊິກນາໂຕ, ທ່ານ ເຈມສ໌ ສະໂຕເທັນເບີກ, ເລຂາທິການ ໃຫຍ່ອົງການນາໂຕ ໄດ້ກ່າວວ່າ: ການທີ່ ອູແກຣນ ຈະເຂົ້າເປັນສະມາຊິກຂອງອົງການນາໂຕ ຫຼື ບໍ່ນັ້ນ ບໍ່ໄດ້ຂຶ້ນກັບ

ລັດເຊຍ, ແຕ່ຫາກແມ່ນການເຫັນດີຈາກ 30 ປະເທດສະມາຊິກຂອງອົງການນາໂຕເທົ່ານັ້ນ, ຊຶ່ງຜ່ານມາ ລັດເຊຍ ໄດ້ຄັດຄ້ານໃນຂໍ້ຕົກລົງສະບັບປີ 2008 ກ່ຽວກັບ ຈໍເຈຍ ແລະ ອູແກຣນ ໄດ້ສະເໜີເຂົ້າເປັນສະມາຊິກຂອງອົງການນາໂຕ. ລັດເຊຍ ຮຽກຮ້ອງໃຫ້ນາໂຕ ຢຸດຕິການຕິດຕັ້ງລະບົບອາວຸດໂຈມຕີນຳວິຖີ ຢູ່ໃນອູແກຣນ ຫຼື ປະເທດອ້ອມຂ້າງລັດເຊຍ. ຂະນະດຽວກັນ ທ່ານ ໂອລາຟ ຊອບ, ນາຍົກລັດຖະມົນຕີເຢຍລະມັນ ໄດ້ກ່າວເຖິງຄວາມສຳຄັນໃນການຟື້ນຟູການພົບປະເຈລະຈາ Normandy ຄືນໃໝ່ ທີ່ປະກອບດ້ວຍ 04 ປະເທດ (ລັດເຊຍ, ເຢຍລະມັນ, ຝຣັ່ງ ແລະ ອູແກຣນ) ຊຶ່ງລ່າສຸດໄດ້ພົບປະກັນໃນເດືອນທັນວາ ປີ 2019 ຢູ່ຝຣັ່ງ. ທ່ານ ວະລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ ໄດ້ລົມສາຍທາງໂທລະສັບ ກັບ ທ່ານ ບໍຣິດສ໌ ຈອນເຊີນ, ນາຍົກລັດຖະມົນຕີຂອງອັງກິດ ວ່າ: ຜ່ານມາ ອູແກຼນ ໄດ້ລະເມີດຕໍ່ສັນຍາ ມິ້ນ ຫຼາຍຄັ້ງ, ພ້ອມທັງຮຽກຮ້ອງໃຫ້ນາໂຕ ຢຸດຕິການຊ້ອມຮົບຮ່ວມກັບອູແກຼນ ແລະ ຂະຫຍາຍອິດທິພົນຂອງຕົນເຂົ້າໃນເອີຣົບຕາເວັນອອກ ຫຼື ຢູ່ບັນດາປະເທດໃກ້ຄຽງກັບລັດເຊຍ, ຖ້າບໍ່ດັ່ງນັ້ນ ລັດເຊຍຈະປະຕິບັດມາດຕະການຂັ້ນເດັດຂາດ ເພື່ອຮັກສາສັນຕິພາບ ແລະ ສະຖຽນລະພາບໃນພາກພື້ນ ແລະ ສາກົນ.

- ວັນທີ 28/12/2021, ທ່ານ ໂຈ ໄບເດິນ, ປະທານາທິບໍດີ ອາເມລິກາ ໄດ້ລົງນາມໃນແຜນງົບປະມານຮັບໃຊ້ວຽກງານປ້ອງກັນປະເທດ ມູນຄ່າ 770 ຕື້ໂດລາສະຫະລັດ ໃນສົກປີ 2022. ໃນນັ້ນ, 7,1 ຕື້ ໂດລາ ຈະໃຊ້ເຂົ້າໃນແຜນການຮັກສາຄວາມໝັ້ນຄົງໃນພາກພື້ນປາຊີຟິກ, 300 ລ້ານໂດລາຈະໃຊ້ເຂົ້າໃນການສົ່ງເສີມກອງກຳລັງໃນອູແກຼນ, 4 ຕື້ ໂດລາ ຈະໃຊ້ເຂົ້າໃນການເພີ່ມທະວີ ການຮັກສາຄວາມໝັ້ນຄົງໃນພາກພື້ນເອີລົບ. ງົບປະມານດັ່ງກ່າວແມ່ນເພີ່ມຂຶ້ນ 3 ເທົ່າ ຖ້າທຽບໃສ່ ປີ 2021. ທ່ານ Bernie Sanders, ສະມາຊິກສະພາ ແລະ ທ່ານ Joe Manchin, ສະມາຊິກພັກ Democrats, ບໍ່ເຫັນດີ ຕໍ່ແຜນງົບປະມານດັ່ງກ່າວ, ເຊິ່ງຈະເຮັດໃຫ້ມີການຂາດດູນງົບປະມານ. ແຜນງົບປະມານກອງທັບ ຂອງ ອາເມລິກາດັ່ງກ່າວ ແມ່ນຫຼາຍທີ່ສຸດໃນໂລກ, ຫຼາຍກວ່າ 03 ເທົ່າ ທຽບໃສ່ ສປ ຈີນ ທີ່ໃຊ້ງົບປະມານຫຼາຍອັນດັບສອງ ຂອງໂລກເຂົ້າໃນການພັດທະນາກອງທັບ.

**4) ສະພາບການໃນຂົງເຂດຕາເວັນອອກກາງ**

- ວັນທີ 29 ທັນວາ 2021, ກະຊວງການຕ່າງປະເທດອີຣານ ໄດ້ກ່າວປະນາມອິດສະລາແອນ ໃນການໂຈມຕີດ້ວຍການຍິງລູກສອນໄຟ ໃສ່ທ່າກຳປັ່ນ Katakia ຂອງຊີຣີ ວ່າ ເປັນການລະເມີດອຳນາດອະທິປະໄຕ ແລະ ລະເມີດສິດທິມະນຸດຢ່າງຮ້າຍແຮງ, ທັງໄດ້ຮຽກຮ້ອງໃຫ້ ສາກົນ ປະຕິບັດມາດຕະການ ເພື່ອປ້ອງກັນເຫດການໂຈມຕີໃນລັກສະນະດັ່ງກ່າວ ອັນເປັນໄພຂົ່ມຂູ່ສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ.

## 3. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

- ວັນທີ 9/12/2021, ກົມການເມືອງສູນກາງພັກກອມມູນິດຫວຽດນາມ ໄດ້ຈັດກອງປະຊຸມວຽກງານພະນັກງານທົ່ວປະເທດ ເພື່ອເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍ ບົດສະຫຼຸບ ແລະ ຂໍ້ກຳນົດຂອງ ຄະນະບໍລິຫານງານສູນກາງພັກ ກ່ຽວກັບວຽກງານກໍ່ສ້າງ, ປັບປຸງພັກ ໂດຍຜ່ານຮູບແບບເຂົ້າຮ່ວມກອງປະຊຸມໂດຍກົງ ແລະ ຜ່ານທາງໄກ ໂດຍການເປັນປະທານຂອງ ສະຫາຍເລຂາທິການໃຫຍ່ ຫງວຽນຟູຈ້ອງ. ກອງປະຊຸມ ໄດ້ຮັບຟັງການລາຍງານກ່ຽວກັບບັນດາເນື້ອໃນຕົ້ນຕໍຂອງ ບົດສະຫຼຸບຂອງ ຄະນະບໍລິຫານງານສູນກາງພັກ; ແຜນການຂອງກົມການເມືອງ ວ່າດ້ວຍການຈັດປະຕິບັດບົດສະຫຼຸບ ແລະ ຂໍ້ກຳນົດຂອງ ຄະນະບໍລິຫານງານສູນກາງພັກ ວ່າດ້ວຍບັນດາຂໍ້ຫ້າມຂອງສະມາຊິກພັກ.

- ວັນທີ 16/12/2021 ສະຫາຍ ຫງວຽນ ຟູ ຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ປະທານຊີ້ນຳກອງປະຊຸມກອງທັບສູນກາງ ຄັ້ງທີ 3 ໄລຍະ 2020-2025, ມີການເຂົ້າຮ່ວມຂອງ ສະຫາຍ ຫງວຽນ ຊວັນຟຸກ, ປະທານປະເທດ ສສ ຫວຽດນາມ, ກຳມະການຄະນະປະຈຳກອງທັບສູນກາງ; ສະຫາຍ ຟາມມິງຈິງ, ນາຍົກລັດຖະມົນຕີ, ກຳມະການຄະນະປະຈຳກອງທັບສູນກາງ ; ສະຫາຍ ຜົອ ຟານວັນຢາງ, ຮອງເລຂາຄະນະພັກກອງທັບສູນກາງ ພ້ອມດ້ວຍບັນດາການນຳຂັ້ນສູງຂອງກະຊວງປ້ອງກັນປະເທດຫວຽດນາມ. ກອງປະຊຸມໄດ້ສະຫຼຸບຕີລາຄາການປະຕິບັດວຽກງານຂອງກອງທັບ ປະຈຳປີ 2021, ກຳນົດທິດທາງການນຳພາ, ບົດບາດໜ້າທີ່ ແລະ ວຽກງານກໍ່ສ້າງພັກຂອງກອງທັບໃນປີ 2022.

- ວັນທີ 21–22 /12/2021 ສະຫາຍ ຫງວຽນ ຊວັນ ຟຸກ, ກຳມະການກົມການເມືອງ, ປະທານປະເທດ ຫວຽດນາມ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມກຳປູເຈຍ ຢ່າງເປັນທາງການ ແລະ ໄດ້ພົບປະກັບ ສົມເດັດ ນໍໂຣດົມ ສີຫາ ໂມນີ,ກະສັດແຫ່ງຣາຊະອານາຈັກກຳປູເຈຍ. ສອງຝ່າຍໄດ້ ອອກຖະແຫຼງການຮ່ວມກັນ ມີເນື້ອໃນຈຳນວນໜຶ່ງດັ່ງນີ້: 1). ສອງຝ່າຍເຂົ້າຮ່ວມພິທີວາງສີລາລຶກກໍ່ສ້າງສະພາແຫ່ງຊາດຂອງກຳປູເຈຍ ເຊິ່ງໄດ້ຮັບການຊ່ວຍເຫຼືອຈາກ ພັກ, ລັດ ແລະ ປະຊາຊົນຫວຽດນາມ; 2). ສອງຝ່າຍໄດ້ຕີລາຄາສູງຕໍ່ການຢ້ຽມຢາມຂອງການນຳຂັ້ນສູງ ຫວຽດນາມ ແລະ ເປັນ ຂີດໝາຍທີ່ສຳຄັນໃນການເປີດປີສາຍພົວພັນມິດຕະພາບ ຫວຽດນາມ - ກຳປູເຈຍ ໃນປີ 2022; 3). ສອງຝ່າຍໄດ້ ສະແດງຄວາມພໍໃຈໃນການພົວພັນຮ່ວມມືຮອບດ້ານ, ໃກ້ຊິດ ທີ່ນຳເອົາຜົນປະໂຫຍດມາສູ່ປະຊາຊົນຂອງສອງຊາດ ຕະຫຼອດໄລຍະ 55 ປີ ຜ່ານມາ; 4). ສອງຝ່າຍໄດ້ເນັ້ນຄືນກ່ຽວກັບ ບູລິມະສິດທີ່ຈຳເປັນໃນການສືບຕໍ່ເພີ່ມທະວີ ແລະ ພັດທະນາ ສາຍພົວພັນຮ່ວມມືຂອງສອງປະເທດ ໃນການເປັນ "ບ້ານໃກ້ເຮືອນຄຽງທີ່ດີ, ສາຍພົວພັນມິດຕະພາບທີ່ ເປັນມູນເຊື້ອ, ການຮ່ວມມືຮອບດ້ານ ແລະ ໝັ້ນຄົງຍາວນານ" ; 5). ສອງຝ່າຍເຫັນດີສືບຕໍ່ເພີ່ມທະວີການຕິດຕໍ່ ສື່ສານ ແລະ ແລກປ່ຽນຄະນະຜູ້ແທນຂັ້ນສູງທຸກລະດັບ ເພື່ອເປັນຂີດໝາຍໃຫ້ແກ່ວັນຄົບຮອບ 55 ປີ ແຫ່ງການ ສ້າງຕັ້ງສາຍພົວພັນການທູດ ຫວຽດນາມ - ກຳປູເຈຍ; 6). ສອງຝ່າຍໄດ້ຊົມເຊີຍຕໍ່ການພົວພັນຮ່ວມມືທາງດ້ານ ເສດຖະກິດ, ການຄ້າ ແລະ ການລົງທຶນ ໃນໄລຍະຜ່ານມາ ແລະ ເຫັນດີສົ່ງເສີມ ວຽກງານການລົງທຶນຮອບດ້ານ; 7). ສອງຝ່າຍຢືນຢັນເຖິງການຮ່ວມມືທາງດ້ານສາທາລະນະສຸກ, ຢາວັກແຊັງ ຕ້ານໂຄວິດ - 19, ຟື້ນຟູ ເສດຖະກິດ - ສັງຄົມ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ -19; 8). ສອງຝ່າຍເຫັນດີ ສືບຕໍ່ເພີ່ມທະວີທາງ ດ້ານວຽກງານປ້ອງກັນຊາດ- ປ້ອງກັນຄວາມສະຫງົບ; 9). ສືບຕໍ່ເຄົາລົບ ແລະ ຮ່ວມມື ກ່ຽວກັບວຽກງານປັກຫຼັກ ໝາຍຊາຍແດນທາງບົກ ແລະ ອື່ນໆ; 10). ເຫັນດີສົ່ງເສີມ ແລະ ປັບປຸງການຮ່ວມມືໃນຂະແໜງ ກົດໝາຍ ແລະ ຍຸດຕິ ທຳ, ແຮງງານ ແລະ ສະຫວັດດີການສັງຄົມ, ຂໍ້ມູນ ແລະ ເຕັກໂນໂລຊີການສື່ສານ, ວັດທະນະທຳ, ກິລາ, ການ ທ່ອງທ່ຽວ, ການທະນະຄານ, ການເງິນ, ກະສິກຳ, ປ່າໄມ້, ການປະມົງ ແລະ ອື່ນໆ; 11). ສອງຝ່າຍໄດ້ແລກປ່ຽນຄຳ ຄິດເຫັນກ່ຽວກັບພາກພື້ນ ແລະ ສາກົນ ແລະ ເຫັນດີສືບຕໍ່ຮ່ວມມືກັນຢ່າງໃກ້ຊິດໃນກອບຫຼາຍຝ່າຍ ເພື່ອຮັກສາ ສະຖຽນລະພາບ, ຄວາມສະຫງົບ, ຄວາມໝັ້ນຄົງ ແລະ ຄວາມປອດໄພ, ສົ່ງເສີມເສລີພາບໃນການເດີນເຮືອ ແລະ ບິນ ຜ່ານ ໃນທະເລຈີນໃຕ້, ສົ່ງເສີມການແກ້ໄຂບັນຫາໂດຍສັນຕິວິທີຕາມກົດໝາຍສາກົນ; 12). ສອງຝ່າຍໄດ້ລົງນາມຂໍ້ ຕົກລົງຮ່ວມກັນ 7 ສະບັບ ກ່ຽວກັບການຮ່ວມມືຂອງບັນດາກະຊວງຂອງສອງປະເທດ.

**2) ພັກກອມມູນິດຈີນ**

- ວັນທີ 07/12/2021, ຄະນະກຳມະການກົມການເມືອງສູນກາງພັກກອມມູນິດຈີນ ໄດ້ດຳເນີນກອງ ປະຊຸມເຊື່ອມຊຶມລວມໝູ່ ຄັ້ງທີ 35 ກ່ຽວກັບ ການສ້າງລະບົບກົດໝາຍສັງຄົມນິຍົມຕາມສີສັນພິເສດຂອງຈີນ ພາຍ ໃຕ້ການເປັນປະທານຂອງ ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປ ຈີນ, ໄດ້ມີຄຳເຫັນວ່າ: ປະເທດຈີນ ພວມຢູ່ໃນໄລຍະສຳຄັນຂອງການຟື້ນຟູອັນໃຫຍ່ຫຼວງຂອງໂລກ. ວຽກງານການປະຕິຮູບ, ພັດທະນາ ແລະ ສະຖຽນລະພາບ ແມ່ນມີຄວາມຫຍຸ້ງຍາກ, ເປີດກວ້າງການເຂົ້າສູ່ໂລກພາຍນອກຢ່າງເລິກເຊິ່ງ. ຕ້ອງຍຶດໝັ້ນເດີນຕາມ ເສັ້ນທາງຂອງລັດທິສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ສຸມໃສ່ແກ້ໄຂບັນຫາທີ່ພົ້ນເດັ່ນໃນດ້ານກົດໝາຍ, ຊຸກຍູ້ ການກໍ່ສ້າງລະບົບກົດໝາຍສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ພ້ອມທັງຍົກສູງລະດັບຄວາມສາມາດການປົກຄອງ ດ້ວຍກົດໝາຍຮອບດ້ານ ເພື່ອກໍ່ສ້າງປະເທດສັງຄົມນິຍົມທີ່ທັນສະໄໝຮອບດ້ານ, ເປົ້າໝາຍສະຕະວັດທີ 21 ແມ່ນ ການຮັບປະກັນຄວາມໝັ້ນຄົງດ້ານກົດໝາຍ.

- ວັນທີ 15/12/2021, ສະຫາຍ ສີຈິ້ນຜິງ ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປ ຈີນ ໄດ້ພົບປະ ກັບ ທ່ານ ປູຕິນ, ປະທານາທິບໍດີລັດເຊຍ ຜ່ານວີດີໂອທາງໄກ. ສາຍພົວພັນສອງປະເທດຖືກເອີ້ນວ່າເປັນ "ນະວັດຕະ ກຳສາຍພົວພັນຮ່ວມມືສາກົນ ໃນສັດຕະວັດທີ 21". ສອງຝ່າຍໄດ້ປຶກສາຫາລືກ່ຽວກັບການຮ່ວມມືທາງດ້ານ ເສດຖະກິດ, ການຄ້າ, ພະລັງງານ, ວິທະຍາສາດ, ເຕັກໂນໂລຊີ ແລະ ການພົວພັນຮ່ວມມືໃນພາກພື້ນ ແລະ ສາກົນ, ລວມທັງບັນຫາການຮ່ວມມືຍຸດທະສາດ ລະຫວ່າງ ລັດເຊຍ ແລະ ຈີນ. ສອງຝ່ຍໄດ້ຕີລາຄາການຮ່ວມມືຂອງສອງ ປະທດໃນໄລຍະຜ່ານມາ ໂດຍຍົກໃຫ້ເຫັນທາງດ້ານການຄ້າທີ່ສອງປະເທດມີມູນຄ່າການຄ້າຮ່ວມກັນຫຼາຍກວ່າ 100

ຕີ້ໂດລາສະຫະລັດ ໃນສາມໄຕມາດທຳອິດ, ໂຄງການຍຸດທະສາດຂະໜາດໃຫຍ່ໄດ້ຮັບການປະຕິບັດຢ່າງສຳເລັດຜົນ, ການຮ່ວມກັນສ້າງ "ໜຶ່ງແລວ ໜຶ່ງເສັ້ນທາງ" ແລະ ສະຫະພາບເອີຣົບ ໄດ້ກ້າວໄປໜ້າຢ່າງວ່ອງໄວ. ສອງຝ່າຍ ຍັງໄດ້ແລກປ່ຽນທັດສະນະ ກ່ຽວກັບການພົວພັນລະຫວ່າງບັນດາປະເທດໃຫຍ່ ແລະ ປະຊາທິປະໄຕໃນປັດຈຸບັນ. ສປ ຈີນ ຍິນດີເພີ່ມທະວີການສື່ສານ ແລະ ປະສານງານກັບລັດເຊຍ ເພື່ອຊີ້ນຳປະຊາຄົມໂລກສ້າງທັດສະນະປະຊາທິປະໄຕ ທີ່ຖືກຕ້ອງ ແລະ ປົກປ້ອງສິດປະຊາທິປະໄຕອັນຊອບທຳຂອງທຸກປະເທດ. ສ່ວນ ທ່ານ ປູຕິນ ໄດ້ໃຫ້ຄຳເຫັນວ່າ: ການພົວພັນລະຫວ່າງລັດເຊຍ-ຈີນ ໃນປັດຈຸບັນຢູ່ໃນໄລຍະທີ່ດີທີ່ສຸດໃນປະຫວັດສາດ, ສະແດງໃຫ້ເຫັນຄວາມໄວ້ເນື້ອເຊື່ອໃຈກັນດ້ານຍຸດທະສາດ ແລະ ເປັນແບບຢ່າງ ເພື່ອບັນລຸຜົນປະໂຫຍດຮ່ວມກັນ ແລະ ໄດ້ຮັບໄຊຊະນະ ບົນພື້ນຖານບໍ່ແຊກແຊງເຂົ້າກິດຈະການພາຍໃນຂອງກັນ ແລະ ກັນ. ພ້ອມກັນນັ້ນ, ທ່ານ ປູຕິນ ຄາດຫວັງວ່າຈະໄປຢ້ຽມຢາມຈີນ ໂດຍໄວ ແລະ ເຂົ້າຮ່ວມພິທີເປີດງານກິລາໂອລິມປິກລະດູໜາວ ທີ່ປັກກິ່ງ; ລັດເຊຍ ຍິນດີສືບຕໍ່ເພີ່ມທະວີການຮ່ວມມືກັບຈີນ ໃນຂົງເຂດເສດຖະກິດ, ການຄ້າ, ນ້ຳມັນ, ອາຍແກັສ, ການເງິນ, ການບິນອາວະກາດ ແລະ ໂຄງການຍຸດທະສາດທີ່ສຳຄັນ, ຊຸກຍູ້ການເຊື່ອມຈອດຂອງສະຫະພາບເສດຖະກິດເອີຣົບ ຕື່ມອີກ ດ້ວຍຂໍ້ລິເລີ່ມ " ໜຶ່ງແລວໜຶ່ງເສັ້ນທາງ". ເພີ່ມທະວີການຮ່ວມມືຕ້ານການແຜ່ລະບາດຂອງພະຍາດ ແລະ ຕ້ານການເຄື່ອນໄຫວຫັນບັນຫາໂລກລະບາດເປັນບັນຫາການເມືອງ. ນອກນັ້ນ, ສອງຝ່າຍຍັງໄດ້ແລກປ່ຽນຄວາມຄິດເຫັນ ກ່ຽວກັບບັນຫາ ພາກພື້ນ ແລະ ສາກົນ. ຜູ້ນຳຂອງສອງປະເທດ ມີແຜນຈະພົບປະກັນ ຢູ່ນະຄອນຫຼວງປັກກິ່ງ ໃນເດືອນ ກຸມພາ 2022.

**3). ພັກແຮງງານເກົາຫຼີ**

- ວັນທີ 28 - 31/12/2021, ພັກແຮງງານເກົາຫຼີ ໄດ້ເປີດກອງປະຊຸມຄົບຄະນະຄັ້ງທີ 4 ຂອງ ກຳມະການສູນກາງພັກ ສະໄໝທີ 8 ໂດຍການເປັນປະທານ ຂອງ ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່, ປະທານປະເທດ ແລະ ຜູ້ນຳຂັ້ນສູນກາງ ແລະ ທ້ອງຖິ່ນເຂົ້າຮ່ວມ. ກອງປະຊຸມໄດ້ທົບທວນການຈັດຕັ້ງປະຕິບັດແຜນຍຸດທະສາດ ປີ 2021 ແລະ ປຶກສາຫາລືກ່ຽວກັບການຮັບຮອງເອົາ ຍຸດທະສາດ ແລະ ຍຸດທະວິທີ ປີ 2022. ພ້ອມກັນນັ້ນ, ກອງປະຊຸມ ຍັງໄດ້ຮັບຮອງເອົາບົດລາຍງານແຜນພັດທະນາຊົນນະບົດ ໄລຍະສັ້ນ ແລະ ໄລຍະຍາວ ທີ່ແທດເໝາະກັບເງື່ອນໄຂ ແລະ ສະພາບຄວາມເປັນຈິງ, ຄວາມຮຽກຮ້ອງຕ້ອງການຂອງການພັດທະນາ ແລະ ການກໍ່ສ້າງສັງຄົມນິຍົມຕາມຮູບແບບຂອງ ສປປ ເກົາຫຼີ; ປຶກສາຫາລືກ່ຽວກັບ ວຽກງານການຮ່ວມມືຂອງສອງເກົາຫຼີ, ວຽກງານການຕ່າງປະເທດ, ແຜນພັດທະນາອາວຸດ ແລະ ຍຸດທະສາດຂອງກອງທັບ, ສະຫຼຸບການຈັດຕັ້ງແຜນງົບປະມານປີ 2021 ແລະ ສະເໜີແຜນປີ 2022 ແລະ ວຽກງານອື່ນໆ.

**4). ພັກປະຊາຊົນກຳປູເຈຍ**

ວັນທີ 24/12/2021, ພັກປະຊາຊົນກຳປູເຈຍ ໄດ້ດຳເນີນກອງປະຊຸມໃຫຍ່ສູນກາງ ຄັ້ງທີ 43 ໂດຍການເປັນປະທານຂອງ ທ່ານ ສົມເດັດ ຮຸນເຊັນ, ປະທານພັກ; ທ່ານ ເຮັງຊຳຣິນ ປະທານກິດຕິມະສັກ; ທ່ານ ສໍເຂງ, ຮອງປະທານພັກ; ທ່ານ ຊາຍຊຸມ, ຮອງປະທານພັກ ແລະ ບັນດາກົມການເມືອງ ແລະ ກຳມະການສູນກາງ 775 ທ່ານເຂົ້າຮ່ວມ. ກອງປະຊຸມໄດ້ສະໜັບສະໜູນ ທ່ານ ສົມເດັດ ຮຸນເຊັນ ລົງສະໝັກເລືອກຕັ້ງຊີງຕຳແໜ່ງນາຍົກລັດຖະມົນຕີ ກຳປູເຈຍ ປີ 2023 ແລະ ລົງຄະແນນສຽງເລືອກເອົາ ທ່ານ ພົຫ ຮຸນມາແນັດ, ຜູ້ບັນຊາການກອງທັບລາດຊະວົງກຳປູເຈຍ (ລູກຊາຍທ່ານ ຮຸນເຊັນ) ເປັນຜູ້ສະໝັກຊີງຕຳແໜ່ງນາຍົກ ກຳປູເຈຍໃນອະນາຄົດ. ກອງປະຊຸມ ໄດ້ລົງຄະແນນສຽງເລືອກເອົາ ທ່ານ ນາຍພົນ ເຕຍບັນ, ກຳມະການສູນກາງພັກ, ຮອງນາຍົກ, ຮອງລັດຖະມົນຕີປ້ອງກັນປະເທດ ແລະ ທ່ານ ນາງ ແມນ ສອມອອນ, ກຳມະການສູນກາງພັກ, ຮອງນາຍົກລັດຖະມົນຕີ, ຮອງລັດຖະມົນຕີພົວພັນ - ກວດກາ ປະຈຳສະພາແຫ່ງຊາດ ເປັນຮອງປະທານພັກປະຊາຊົນກຳປູເຈຍ. ພ້ອມກັນນັ້ນ, ກອງປະຊຸມຍັງໄດ້ປຶກສາຫາລືກ່ຽວກັບການເລືອກຕັ້ງສະພາທ້ອງຖິ່ນ ສະໄໝທີ 5 ໃນປີ 2022 ແລະ ຕີລາຄາລວມສະພາບການໃນປີ 2021, ທິດທາງແຜນການ ແລະ ຈຸດສຸມໃນປີ 2022 ຂອງພັກປະຊາຊົນ ກຳປູເຈຍ.

**6). ເຢຍລະມັນ**

ວັນທີ 08/12/2021, ສະພາຕໍ່າຂອງ ເຢຍລະມັນ ລົງຄະແນນສຽງເລືອກເອົາ ທ່ານ Olaf Schol, ຜູ້ນໍາຈາກພັກສັງຄົມປະຊາທິປະໄຕ )SPD(, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ເປັນນາຍົກລັດຖະມົນຕີ (chancellor) ຄົນທີ 9 ຂອງລັດຖະບານປະສົມຂອງເຢຍລະມັນ ດ້ວຍຄະແນນ 395/707 ບ່ອນນັ່ງ. ລັດຖະບານປະສົມ ສາມຝ່າຍຂອງເຢຍລະມັນ ປະກອບມີພັກສັງຄົມປະຊາທິປະໄຕ )SPD(, ພັກຂຽວ )Greens( ແລະ ພັກເສລີປະຊາທິປະໄຕ )FDP(. ໃນເບື້ອງຕົ້ນໄດ້ມີການເຫັນດີຮ່ວມກັນວ່າ ລັດຖະບານຊຸດໃໝ່ຈະຕ້ອງຢຸດຕິການສ້າງໜີ້ສາທາລະນະ ເພື່ອຮັບມືກັບການລະບາດຂອງພະຍາດໂຄວິດ-19; ເຫັນດີເພີ່ມຄ່າແຮງຂັ້ນຕໍ່າຈາກ 9,6 ເອີໂຣ ເປັນ 12 ເອີໂຣຕໍ່ຊົ່ວໂມງ; ຫຼຸດອາຍຸຂອງຜູ້ມີສິດເລືອກຕັ້ງຈາກ 18 ປີມາເປັນ 16 ປີ ເພື່ອແນ່ໃສ່ການເຂົ້າເຖິງໄວໜຸ່ມໃຫ້ຫຼາຍຂຶ້ນໃນການເລືອກຕັ້ງຄັ້ງຕໍ່ໄປ; ຢຸດຕິການໃຊ້ພະລັງງານຖານຫີນຢ່າງຖາວອນພາຍໃນປີ 2030; ເຫັນດີຍົກລະດັບອໍານາດທາງຍຸດທະສາດຂອງສະຫະພາບເອີຣົບ.

**8). ເບຣາຣຸດຊີ**

ລັດຖະບານ ເບລາຣຸດຊີ ໄດ້ເຜີຍແຜ່ຮ່າງເອກະສານປັບປຸງລັດຖະທໍາມະນູນ ວ່າດ້ວຍຕໍາແໜ່ງປະທານາ ທິບໍດີ, ໂດຍໄດ້ສະເໜີເອົາການຈໍາກັດໄລຍະເວລາຂອງການເປັນປະທານາທິບໍດີ ໄດ້ພຽງ 02 ສະໄໝ ໄລຍະເວລາ 10 ປີ ກັບມາໃຊ້ອີກຄັ້ງ ຫຼັງຈາກທີ່ໄດ້ຍົກເລີກໄປ, ເຊິ່ງຈະເຮັດໃຫ້ ທ່ານ Alexander Lukashenko, ປະທານາທິບໍດີ ສາມາດລົງສະໝັກເລືອກຕັ້ງໄດ້ອີກ 02 ສະໄໝ ພາຍຫຼັງສິ້ນສຸດວາລະໃນປີ 2025 ແລະ ຖ້າໄດ້ຮັບເລືອກຕັ້ງ ເປັນປະທານາທິບໍດີ ອີກສະໄໝຕໍ່ໄປ ຈະເຮັດໃຫ້ທ່ານສືບຕໍ່ເປັນປະທານາທິບໍດີ ຮອດປີ 2035. ຮ່າງເອກະສານດັ່ງກ່າວໄດ້ເຜີຍແຜ່ໃນເວບໄຊ້ ຂອງລັດຖະບານເບລາຣູດຊີ ເພື່ອໃຫ້ປະຊາຊົນໄດ້ສະແດງຄໍາຄິດເຫັນ ແລະ ສະພາຈະໄດ້ລົງຄະແນນສຽງຮັບຮອງເອົາໃນເດືອນກຸມພາ ປີ 2022. ທ່ານ Alexander Lukashenko, ເປັນປະທານາທິບໍດີ ເບລາຣຸດຊີ ແຕ່ ປີ 1994 - 2025 ເປັນເວລາ 31 ປີ.

**11). ຈີເລ**

ຈີເລ ໄດ້ດໍາເນີນການເລືອກຕັ້ງປະທານາທິບໍດີທົ່ວປະເທດ ຮອບທີ 01 ໃນ ວັນທີ 21 ພະຈິກ 2021, ເນື່ອງຈາກເປັນການເລືອກຕັ້ງ ຂອງຜູ້ສະໝັກເປັນປະທານາທິບໍດີ, ບໍ່ມີຜູ້ໃດ ໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ, ຈຶ່ງມີການເລືອກຕັ້ງຮອບສອງ ທີ່ຈັດຂຶ້ນ ໃນວັນທີ 19 ທັນວາ 2021, ຜົນການເລືອກຕັ້ງ ທ່ານ Gabriel Boric, ຫົວໜ້າພັກລວມສັງຄົມຈີເລ Convergencia Social (CS) ເປັນພັກຝ່າຍຊ້າຍ, ໄດ້ຮັບໄຊຊະນະດ້ວຍຄະແນນສຽງ 55.85%; ອັນດັບທີສອງແມ່ນ ທ່ານ José Antonio Kast, ປະທານພັກຣີພັບລີກັນຈີເລ Partido Republicano (PLR) ເປັນພັກຝ່າຍຂວາ ໄດ້ຄະແນນ 46.87%. ການເລືອກຕັ້ງຄັ້ງນີ້ ມີປະຊາຊົນອອກມາໃຊ້ສິດປ່ອນບັດເລືອກຕັ້ງຫຼາຍກວ່າ 15 ລ້ານຄົນ. ທ່ານ Gabriel Boric ຈະເຂົ້າພິທີສາບານຕົນເປັນປະທານາທິບໍດີ ຈີເລ ຄົນທີ 66 ໃນວັນທີ 11 ມີນາ 2022.

ແຫຼ່ງຂ່າວອ້າງອີງ : Vietnam News, Vietnam- Express, VNS, Xinhua, CNA, Global Times, CRI, Khmer Times, Jakarta post, Aljazeera, Moscow Times, RT, Kpl, Sputnik, Yonhap, BBC, Euronews, AFP, NHK, Aljazeera, CGTN

# II. ການເຄື່ອນໄຫວວຽກງານ ຂອງການນຳ ພັກ ປປ ລາວ

## 1. ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມສາກົນ ລະຫວ່າງ ພັກການເມືອງ ຜ່ານຮູບແບບວິດີໂອທາງໄກ




ໃນວັນທີ 01 ທັນວາ 2021, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ນຳພາຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສາກົນ ລະຫວ່າງ ພັກການເມືອງ ຜ່ານຮູບແບບວິດີໂອທາງໄກ, ເຊິ່ງໄດ້ຈັດຂຶ້ນທີ່ນະຄອນຫຼວງມົດສະກູ, ສ. ລັດເຊຍ ໂດຍການເປັນເຈົ້າພາບຂອງພັກລັດເຊຍເອກະພາບ ພາຍໃຕ້ຫົວຂໍ້ຕົ້ນຕໍ: ສິ່ງທ້າທາຍສາກົນຂອງສະຕະວັດທີ 21: ຂົງເຂດການຮ່ວມມືລະຫວ່າງພັກການເມືອງ “Global Challenges of the XXI Century: Inter-Party Dimension”. ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນເນື່ອງໃນໂອກາດການສະເຫຼີມສະຫຼອງ ແຫ່ງການສ້າງຕັ້ງພັກລັດເຊຍເອກະພາບ ຄົບຮອບ 20 ປີ, ເຊິ່ງມີບັນດາຜູ້ແທນໃນລະດັບການນຳຂັ້ນສູງພັກ-ລັດ ທີ່ມາຈາກ 31 ພັກການເມືອງ ຈາກ 30 ປະເທດ ແລະ ເລຂາທິການໃຫຍ່ອົງການກອງປະຊຸມສາກົນຂອງບັນດາພັກການເມືອງໃນອາຊີ (ICAPP) ເຂົ້າຮ່ວມ. ສະຫາຍ ທອງລຸນ ສີສຸລິດ ໄດ້ປະກອບຄຳເຫັນໃນກອງປະຊຸມຄັ້ງນີ້ ໂດຍໄດ້ສະແດງຄວາມຊົມເຊີຍວັນສ້າງຕັ້ງພັກລັດເຊຍເອກະພາບ ຄົບ ຮອບ 20 ປີ, ຕີລາຄາສູງ ຕໍ່ການນຳພາທີ່ເຂັ້ມແຂງຕະຫລອດໄລຍະສອງທົດສະວັດຜ່ານມາ, ເຊິ່ງໄດ້ເຮັດໃຫ້ປະເທດລັດເຊຍ ມີການຫັນປ່ຽນທີ່ສຳຄັນ, ບັນລຸຜົນສຳເລັດທີ່ເປັນພື້ນຖານຫຼາຍດ້ານ, ມີການພັດທະນານັບມື້ນັບໜັກແໜ້ນ, ເຂັ້ມແຂງ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງຍົກລະດັບໃຫ້ດີຂຶ້ນເປັນກ້າວໆ, ບົດບາດອິດທິພົນຂອງ ສ. ລັດເຊຍ ແລະ ພັກລັດເຊຍເອກະພາບ ນັບມື້ນັບສູງຂຶ້ນໃນເວທີສາກົນ, ປະກອບສ່ວນສຳຄັນເຂົ້າໃນພາລະກິດລວມຂອງມວນມະນຸດເພື່ອສັນຕິພາບ, ຄວາມໝັ້ນຄົງ, ຄວາມຍຸດຕິທຳ ແລະ ການພັດທະນາແບບຍືນຍົງ; ໄດ້ຕີລາຄາສູງສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອອັນດີງາມ ມາແຕ່ດົນນານ, ທັງເປັນຄູ່ຮ່ວມມືຍຸດທະສາດດ້ານຄວາມໝັ້ນຄົງໃນພາກພື້ນອາຊີ-ປາຊີຟິກ ລະຫວ່າງ ສປປ ລາວ ແລະ ສ. ລັດເຊຍ ຕະຫຼອດໄລຍະ 10 ປີຜ່ານມາ ກໍຄື ການພົວພັນຮ່ວມມື ລະຫວ່າງ ພັກ ປປ ລາວ ແລະ ພັກລັດເຊຍເອກະພາບ ສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ ແລະ ມີຜົນສຳເລັດທີ່ສຳຄັນຫຼາຍດ້ານ ເປັນຕົ້ນແມ່ນດ້ານການເມືອງ, ຄວາມໝັ້ນຄົງ, ເສດຖະກິດ ແລະ ການຄ້າ, ການສຶກສາ, ວິທະຍາສາດ, ເຕັກໂນໂລຊີ, ດ້ານສາທາລະນະສຸກ, ມະນຸດສະທຳ ແລະ

ດ້ານອື່ນໆ; ສະແດງຄວາມຂອບໃຈຢ່າງຈິງໃຈ ແລະ ຮູ້ບຸນຄຸນ ຕໍ່ການສະໜັບສະໜູນ ແລະ ຊ່ວຍເຫລືອອັນລ້ຳຄ່າຂອງ ພັກ, ລັດຖະບານ ແລະ ປະຊາຊົນລັດເຊຍ ທີ່ມີຕໍ່ພັກ, ລັດ ແລະ ປະຊາຊົນລາວ ຕະຫລອດໄລຍະທີ່ຜ່ານມາ.

## 2. ກອງປະຊຸມສຳມະນາທິດສະດີ ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຈີນ ຄັ້ງທີ 9




ເພື່ອຜັນຂະຫຍາຍແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊະຕາກຳ ລາວ-ຈີນ ແລະ ປະຕິບັດຕາມແຜນການຮ່ວມມື ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຈີນ ປະຈຳປີ 2021, ໃນວັນທີ 29 ທັນວາ 2021 ທີ່ຫໍປະຊຸມແຫ່ງຊາດ, ສະພາທິດສະດີສູນກາງພັກ ປປ ລາວ, ຄະນະພົວພັນຕ່າງປະເທດສູນກາງພັກ ສົມທົບກັບ ພາກສ່ວນກ່ຽວຂ້ອງຂອງລາວ ໄດ້ຮ່ວມກັບ ຄະນະໂຄສະນາສູນກາງພັກກອມມູນິດຈີນ ຈັດກອງປະຊຸມສຳມະນາທິດສະດີ ລະຫວ່າງ ສອງພັກ ລາວ-ຈີນ ຄັ້ງທີ IX ຜ່ານວິດີໂອທາງໄກ ພາຍໃຕ້ຫົວຂໍ້: **"ຜົນສຳເລັດອັນຍິ່ງໃຫຍ່ ແລະ ບົດຮຽນປະຫວັດສາດ ຂອງ ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຈີນ ໃນການນຳພາ ພາລະກິດສ້າງສາສັງຄົມນິຍົມຂອງຕົນ"** ໂດຍການເປັນປະທານຮ່ວມ ຂອງ ສະຫາຍ ຄຳພັນ ພົມມະທັດ, ກຳມະການກົມການເມືອງສູນກາງພັກ , ເລຂາທິການສູນກາງພັກ, ປະທານຄະນະກວດກາສູນກາງພັກ ປປ ລາວ, ປະທານອົງການກວດກາແຫ່ງລັດ, ຫົວໜ້າຄະນະຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ແລະ ສະຫາຍ ຮວງ ຄຸນມິງ, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາສູນກາງພັກກອມມູນິດຈີນ, ເຂົ້າຮ່ວມກອງປະຊຸມຍັງມີ ສະຫາຍ ຄຳພັນ ເຜີຍຍະວົງ, ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກ ປປ ລາວ ພ້ອມດ້ວຍບັນດາສະຫາຍພະນັກງານການນຳຂັ້ນສູງ, ບັນດານັກວິທະຍາສາດ, ນັກທິດສະດີ ຂອງ ສອງຝ່າຍເຂົ້າຮ່ວມ. ຝ່າຍລາວ ໄດ້ນຳສະເໜີບັນດາບົດກ່ຽວກັບ ຜົນສຳເລັດ ແລະ ບົດຮຽນຂອງພັກ ປປ ລາວ ໃນການນຳພາສ້າງສາລະບອບປະຊາທິປະໄຕປະຊາຊົນ ເພື່ອກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ, ການຫັນປ່ຽນກົນໄກເສດຖະກິດ, ການເປີດກວ້າງການພົວພັນ ແລະ ການຮ່ວມມືສາກົນ, ການນຳພາສ້າງຊັບພະຍາກອນມະນຸດ ໃຫ້ແກ່ການສ້າງ ແລະ ປົກປັກຮັກສາລະບອບປະຊາທິປະໄຕປະຊາຊົນ. ສຳລັບຝ່າຍຈີນ, ໄດ້ສະເໜີບົດທີ່ປື້ນອ້ອມບົດຮຽນ ແລະ ຜົນສຳເລັດໃນການສ້າງສາສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ເປັນຕົ້ນແມ່ນ ຂະບວນວິວັດອັນສະຫງ່າງາມ ຂອງ ພັກກອມມູນິດຈີນ ໃນການເຕົ້າໂຮມຄວາມສາມັກຄີ ແລະ ນຳພາປະຊາຊົນຈີນຊອກຄົ້ນ ແລະ ກໍ່ສ້າງສັງຄົມນິຍົມ, ຜົນສຳເລັດ ໃນການກໍ່ສ້າງສັງຄົມນິຍົມຢູ່ປະເທດຈີນ, ການຍຶດໝັ້ນແລະພັດທະນາສັງຄົມນິຍົມວິທະຍາສາດ, ແນວຄິດສີຈິ້ນຜິງວ່າດ້ວຍການສັງຄົມນິຍົມທີ່ມີສີສັນພິເສດໃນຍຸກສະໄໝໃໝ່ ເຮັດໃຫ້ລັດທິມາກ ແບບຈີນ ໄດ້ຮັບການພັດທະນາ ໃນສະພາບແວດລ້ອມອັນໃໝ່ ໂດຍສະເພາະແມ່ນ ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ 18 ຂອງພັກກອມມູນິດຈີນ ເປັນຕົ້ນມາ. ພ້ອມ

ນັ້ນ, ຄະນະຜູ້ແທນຂອງທັງສອງຝ່າຍ ຍັງໄດ້ຮ່ວມກັນແລກປ່ຽນ ແລະ ຖອດຖອນບົດຮຽນກ່ຽວກັບການກໍ່ສ້າງສັງຄົມນິຍົມ ຢູ່ສອງປະເທດ ລາວ-ຈີນ.

### 3. ກອງປະຊຸມສຳມະນາທິດສະດີລະຫວ່າງ ພັກປະຊາຊົນ ປະຕິວັດລາວ ແລະ ພັກກອມມູນິດຫວຽດນາມ ຄັ້ງທີ VIII




ໃນວັນທີ 16 ທັນວາ 2021, ສະພາທິດສະດີຂອງສອງພັກ ລາວ-ຫວຽດນາມ ໄດ້ຮ່ວມກັນຈັດກອງປະຊຸມສຳມະນາທິດສະດີລະຫວ່າງ ສອງພັກ ລາວ - ຫວຽດນາມ ຄັ້ງທີ VIII ຜ່ານວິດີໂອທາງໄກ ພາຍໃຕ້ຫົວຂໍ້ "ບັນດາບັນຫາທິດສະດີ - ພຶດຕິກຳຕົວຈິງໃໝ່ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ແລະ ເອກະສານກອງປະຊຸມໃຫຍ່ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ" ໂດຍການເປັນປະທານຮ່ວມຂອງ ສະຫາຍ ຄຳພັນ ເຜີຍຍະວົງ, ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກປະຊາຊົນ ປະຕິວັດລາວ ແລະ ສະຫາຍ ຫງວຽນຊວັນຖັງ, ກຳມະການກົມການເມືອງສູນກາງພັກຫົວໜ້າສະຖາບັນການເມືອງແຫ່ງຊາດ ໂຮ່ຈິມິນ, ປະທານສະພາທິດສະດີສູນກາງພັກກອມມູນິດຫວຽດນາມ. ເຊິ່ງ ປະທານກອງປະຊຸມຂອງສອງຝ່າຍ ໄດ້ຜັດປ່ຽນກັນຂຶ້ນກ່າວຄຳເຫັນ ສະແດງຄວາມຊົມເຊີຍຕໍ່ຄະນະຜູ້ແທນຂອງສອງພັກ ລາວ-ຫວຽດນາມ ທີ່ເຂົ້າຮ່ວມກອງປະຊຸມທີ່ໄດ້ກະກຽມເປັນຢ່າງດີ ແລະ ແລກປ່ຽນຢ່າງກົງໄປກົງມາ; ສະເໜີບົດນຳ ກ່ຽວກັບ ບັນດາບັນຫາທິດສະດີ-ພຶດຕິກຳຕົວຈິງໃໝ່ ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ແລະ ເອກະສານກອງປະຊຸມໃຫຍ່ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ, ໂດຍທັງສອງຝ່າຍ ໄດ້ຍົກໃຫ້ເຫັນຢ່າງຈະແຈ້ງຕໍ່ບັນດາໝາກຜົນລວມຍອດສະຕິປັນຍາຂອງແຕ່ລະພັກ ຕະຫຼອດໄລຍະແຫ່ງການນຳພາທີ່ຜ່ານມາ, ບັນດາແນວທາງຍຸດທະສາດຂອງແຕ່ລະພັກ ລ້ວນແຕ່ມີບົດບາດຕັດສິນໃຫ້ແກ່ການກ້າວເດີນໄປຕາມຈຸດໝາຍຂອງພັກທີ່ກຳນົດໄວ້ ແລະ ບັນດາບັນຫາທິດສະດີ-ພຶດຕິກຳຕົວຈິງໃໝ່ ທີ່ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ແລະ ເອກະສານກອງປະຊຸມໃຫຍ່ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມໄດ້ກຳນົດ ອອກ ເພື່ອເປັນການແລກປ່ຽນ ແລະ ບໍ່ແບ່ງບົດຮຽນ, ເພີ່ມທະວີຄວາມເຂົ້າອົກເຂົ້າໃຈ, ປະກອບສ່ວນເຂົ້າໃນການຮັດແໜ້ນ ແລະ ເພີ່ມທະວີສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ກ້າວເຂົ້າສູ່ລວງເລິກໃນທຸກຂົງເຂດວຽກງານ. ໃນຕອນທ້າຍ, ສະພາທິດສະດີສູນກາງພັກ ລາວ-ຫວຽດນາມ ກໍໄດ້ເຊັນບົດບັນທຶກການຮ່ວມມືກັນໃນໄລຍະ ປີ 2022-2026.

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ ພົບປະຜ່ານວິດີໂອທາງໄກ







ໃນວັນທີ 22 ທັນວາ 2021 ທີ່ ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ, ສະຫາຍ ທອງສະຫວັນ ພົມວິຫານ ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ພົບປະເຮັດວຽກຜ່ານວິດີໂອທາງໄກກັບ ສະຫາຍ ຊົ້ງ ທາວ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ. ເຊິ່ງ ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີ ແລະ ຕີລາຄາສູງ ຕໍ່ການພົບປະສອງຝ່າຍໃນຄັ້ງນີ້, ເປັນການປະຕິບັດຕາມແຜນການຮ່ວມມື ປະຈຳປີ ລະຫວ່າງ ສອງພັກ ກໍຄື ສອງຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ ແລະ ເປັນການຜັນຂະຫຍາຍຄວາມຮັບຮູ້ເປັນເອກະພາບກັນ ລະຫວ່າງ ການນຳສູງສຸດຂອງສອງພັກ ລາວ-ຈີນ; ໄດ້ຕາງໜ້າສູນກາງພັກ ປປ ລາວ ແຈ້ງໂດຍຫຍໍ້ກ່ຽວກັບ ສະພາບການພົ້ນເດັ່ນພາຍໃນພັກ, ພາຍໃນປະເທດ ໃຫ້ຝ່າຍຈີນຊາບ; ຕີລາຄາສູງຕໍ່ຜົນສຳເລັດ ຂອງ ພັກ, ລັດ ແລະ ປະຊາຊົນຈີນ ໃນພາລະກິດສ້າງສາສັງຄົມນິຍົມ ທີ່ມີສີສັນພິເສດຂອງ ສປ ຈີນ ໃນໄລຍະຜ່ານມາ, ໂດຍສະເພາະ ໄດ້ສະແດງຄວາມຊົມເຊີຍ ຕໍ່ ຜົນສຳເລັດ ຂອງ ກອງປະຊຸມຄົບຄະນະ ຄັ້ງທີ 6 ສະໄໝທີ XIX ຂອງ ພັກກອມມູນິດຈີນ ທີ່ຫາກໍ່ສຳເລັດລົງຢ່າງຈົບງາມ ໃນກາງເດືອນ ພະຈິກ ຜ່ານມາ, ເຊື່ອໝັ້ນວ່າ ພາຍໃຕ້ການຊີ້ນຳນຳພາອັນເຂັ້ມແຂງ ແລະ ສະຫຼາດສ່ອງໃສ ຂອງ ພັກກອມມູນິດຈີນ ໂດຍມີ ສະຫາຍເລຂາທິການໃຫຍ່ ສີ ຈິ້ນຜິງ ເປັນແກນກາງ ແລະ ຈາກບົດຮຽນອັນອຸດົມສົມບູນ ໃນການສ້າງສຳເລັດສັງຄົມອິ່ມໜຳສຳລານຮອບດ້ານ ໂດຍພື້ນຖານ ຜ່ານມານັ້ນ, ພັກ, ລັດຖະບານ ແລະ ປະຊາຊົນຈີນອ້າຍນ້ອງ ຈະສາມາດບັນລຸເປົ້າໝາຍ "100 ປີເທດການທີສອງ" ນັ້ນຄື ສ້າງ ສປ ຈີນ ເປັນປະເທດສັງຄົມນິຍົມທັນສະໄໝຮອບດ້ານ ໃນປີ 2035 ທີ່ຕັ້ງໄວ້ຢ່າງແນ່ນອນ. ເວລາດຽວກັນ, ສອງຝ່າຍ ໄດ້ເອກະພາບກັນຕີລາຄາສູງ ຕໍ່ ການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງ ຄຕພ ລາວ-ຈີນ ໃນຕະຫຼອດໄລຍະທີ່ຜ່ານມາ, ປຶກສາຫາລື ແລະ ເປັນເອກະພາບກັນ ກ່ຽວກັບ ທິດທາງການຮ່ວມມື ລະຫວ່າງ 2 ຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ ໃນການເປັນເສນາທິການໃຫ້ແກ່ການພົວພັນຮ່ວມມື ລະຫວ່າງ ສອງພັກ ໃນຕໍ່ໜ້າ, ໂດຍສະເພາະແມ່ນ ການຈັດຕັ້ງຜັນຂະຫຍາຍ ແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ແລະ ແຜນການຮ່ວມມື ລະຫວ່າງ ສອງພັກ ໄລຍະແຕ່ປີ 2021-2025 ໃຫ້ປະກົດຜົນເປັນຈິງ; ສືບຕໍ່ຮັກສາການແລກປ່ຽນບົດຮຽນທາງດ້ານທິດສະດີ ແລະ ພຶດຕິກຳນຳກັນ, ຮ່ວມກັນຈັດກອງປະຊຸມສຳມະນາທິດສະດີ 2 ພັກ ລາວ-ຈີນ ຄັ້ງທີ 9 ທີ່ພັກ ປປ ລາວ ຈະເປັນເຈົ້າພາບໃນທ້າຍເດືອນ ທັນວາ 2021; ສືບຕໍ່ຮັກສາກົນໄກການປະສານງານຢ່າງໃກ້ຊິດ ເພື່ອແລກປ່ຽນບັນຫາຕ່າງໆທີ່ສອງຝ່າຍໃຫ້ຄວາມສົນໃຈຮ່ວມກັນ, ກະກຽມຄວາມພ້ອມດ້ານຕ່າງໆໃຫ້ແກ່ການຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ ຂອງ ສະຫາຍເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ໃນໂອກາດທີ່ເໝາະສົມ, ສືບຕໍ່ປະສານສົມທົບກັນ ໃນການຊຸກຍູ້ການໄປມາຫາສູ່ກັນ ລະຫວ່າງອົງການກ່ຽວຂ້ອງ ຂອງ ສອງສູນກາງພັກ ລາວ-ຈີນ ໃນຕໍ່ໜ້າ. ໃນໂອກາດດັ່ງກ່າວ, ສອງຝ່າຍໄດ້ຮ່ວມກັນລົງນາມ

ເອກະສານຮ່ວມມື ລະຫວ່າງສອງພັກ ລາວ-ຈີນ ໄລຍະ 5 ປີຕໍ່ໜ້າ ຈຳນວນ 2 ສະບັບ, ພ້ອມທັງ ລົງເລິກແລກປ່ຽນຄວາມຄິດເຫັນ ກ່ຽວກັບ ບັນຫາພາກພື້ນ-ສາກົນ ທີ່ສອງຝ່າຍໃຫ້ຄວາມສົນໃຈຮ່ວມກັນ.

**2. ຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສະໄໝພິເສດຂອງອົງການກອງປະຊຸມສາກົນ ຂອງບັນດາພັກກອມມູນິດ ແລະ ກຳມະກອນ (IMCWP) ຜ່ານວິດີໂອທາງໄກ.**




ໃນວັນທີ 11 ທັນວາ 2021, ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເຂົ້າຮ່ວມກອງປະຊຸມທາງໄກສະໄໝພິເສດຂອງອົງການກອງປະຊຸມສາກົນຂອງບັນດາພັກກອມມູນິດ ແລະ ກຳມະກອນ (IMCWP), ເຊິ່ງແມ່ນພັກກອມມູນິດເກຣັກ ແລະ ພັກກອມມູນິດຕວັກກີ ຮ່ວມກັນຈັດຂຶ້ນ ພາຍໃຕ້ຫົວຂໍ້ “ສະພາບການພັດທະນາເສດຖະກິດການເມືອງ ແລະ ການທະຫານສາກົນ, ປະສົບການຕໍ່ສູ້ຂອງບັນດາພັກກອມມູນິດ ແລະ ກຳມະກອນ ແລະ ປະຊາຊົນ. ຄວາມສາມັກຄີກັບກູບາ, ປະຊາຊົນປາແລັດສະຕິນ ແລະ ປະຊາຊົນທີ່ຕໍ່ສູ້ຕ້ານການຂວ້ຳບາດ, ກົນອຸບາຍ ແລະ ການຣຸກຮານຂອງຈັກກະພັດ”. ເຂົ້າຮ່ວມໃນກອງປະຊຸມຄັ້ງນີ້ ມີຜູ້ແທນຈາກ 73 ພັກການເມືອງ ເຊິ່ງເປັນຕົວແທນໃຫ້ແກ່ ບັນດາພັກກອມມູນິດ ແລະ ກຳມະກອນ, ພັກຝ່າຍຊ້າຍ ແລະ ຂະບວນການກ້າວໜ້າໃນໂລກ ທີ່ມາຈາກ 57 ປະເທດ.

ກອງປະຊຸມ ໄດ້ຮັບຮອງເອົາຖະແຫຼງການຮ່ວມ, ເຊິ່ງໄດ້ວາງທິດທາງເປົ້າໝາຍໃນການເຄື່ອນໄຫວຮ່ວມກັນສຳລັບປີ 2022 ເພື່ອເສີມສ້າງການຮ່ວມມືໃນລະດັບສອງຝ່າຍ, ລະດັບພາກພື້ນ ແລະ ສາກົນລະຫວ່າງບັນດາພັກກອມມູນິດ ແລະ ກຳມະກອນ ເພື່ອວາງມາດຕະການປ້ອງກັນ ແລະ ຮັບມືກັບພະຍາດລະບາດ ແລະ ເພີ່ມທະວີຄວາມເຂັ້ມແຂງຂອງລະບົບສາທາລະນະສຸກ; ສະໜັບສະໜູນບັນດາຂໍ້ລິເລີ່ມ ແລະ ການຕໍ່ສູ້ຂອງຊົນຊັ້ນກຳມະກອນຂອງບັນດາປະເທດໃນໂລກ ເພື່ອສິດທິດ້ານຕ່າງໆ, ຕ້ານການແຊກແຊງ, ກົນອຸບາຍມ້າງເພທຳລາຍ ແລະ ການໂຄ່ນລົ້ມຂອງພວກຈັກກະພັດ, ຕ້ານການຂວ້ຳບາດຕໍ່ກູບາ, ສະໜັບສະໜູນການຕໍ່ສູ້ຂອງປະຊາຊົນປາແລັດສະຕິນ ແລະ ບັນຫາອື່ນໆ.

### 3. ຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສຳມະນາພິເສດທາງໄກ ຂອງອົງການກອງປະຊຸມສາກົນ ບັນດາພັກການເມືອງໃນອາຊີ ກ່ຽວກັບ ການປ່ຽນແປງຂອງສະພາບດິນຟ້າອາກາດ




ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາພິເສດທາງໄກ ຂອງອົງການກອງປະຊຸມສາກົນບັນດາພັກການເມືອງໃນອາຊີ (ICAPP) ກ່ຽວກັບ ການປ່ຽນແປງຂອງສະພາບດິນຟ້າອາກາດ ຊຶ່ງໄດ້ຈັດຂຶ້ນໃນວັນທີ 8 ທັນວາ 2021, ພາຍໃຕ້ຫົວຂໍ້: "ບົດບາດຂອງບັນດາພັກການເມືອງໃນອາຊີ ເພື່ອບັນລຸການປ່ອຍທາດອາຍເຮືອນແກ້ວໃຫ້ເຫຼືອສູນ". ໃນກອງປະຊຸມຄັ້ງນີ້ ມີຜູ້ແທນ 55 ທ່ານ ຈາກ 31 ພັກການເມືອງ ທີ່ມາຈາກ 23 ປະເທດໃນອາຊີ, ອົງການບັນດາພັກການເມືອງໃນອາເມລິກາລາຕິນ ແລະ ກາຣິບ (COPPPAL), ອົງການສະພາບັນດາພັກການເມືອງອາຟຣິກາ (CAPP) ແລະ ລັດຖະສະພາສະຫະພາບເອີຣົບ ເຂົ້າຮ່ວມ. ນອກຈາກນີ້, ຍັງມີການເຂົ້າຮ່ວມຂອງ ພະນະທ່ານ ບັນ ກີມູນ, ອະດີດເລຂາທິການໃຫຍ່ອົງການສະຫະປະຊາຊາດຄົນທີ 8, ປະທານສະມັດຊາຂອງສະຖາບັນການເຕີບໂຕສີຂຽວສາກົນ (GGGI), ປະທານສະພາຂອງ GGGI.

ສະຫາຍ ທອງສະຫວັນ ພົມວິຫານ ໄດ້ປະກອບຄຳເຫັນ ໂດຍໄດ້ຍົກໃຫ້ເຫັນນະໂຍບາຍຂອງພັກ ປປ ລາວ ກໍ່ຄື ລັດຖະບານ ສປປ ລາວ ທີ່ຍຶດໝັ້ນແນວທາງການພັດທະນາຕາມທິດສີຂຽວ ແລະ ຍືນຍົງ ແລະ ຖືເອົາການພັດທະນາເສດຖະກິດເປັນໃຈກາງ ຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາວັດທະນະທຳ-ສັງຄົມ; ໃຫ້ຄວາມສຳຄັນຕໍ່ວຽກງານການຮັບມືກັບການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ສູ້ຊົນຮ່ວມກັບປະຊາຄົມໂລກ ໃນການຈັດຕັ້ງປະຕິບັດເປົ້າໝາຍຂອງສົນທິສັນຍາປາຣີ ເພື່ອຫຼຸດຜ່ອນການປ່ອຍ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວ ໃຫ້ເປັນສູນພາຍໃນປີ 2050; ຂະນະດຽວກັນ, ກອງປະຊຸມ ໄດ້ຮັບຮອງເອົາຖະແຫຼງການຮ່ວມຂອງກອງປະຊຸມສຳມະນາພິເສດທາງໄກ ກ່ຽວກັບ ການປ່ຽນແປງຂອງສະພາບດິນຟ້າອາກາດ, ເຊິ່ງໄດ້ຮຽກຮ້ອງໃຫ້ບັນດາພັກການເມືອງ, ລັດຖະບານ ແລະ ພາກເອກະຊົນ ປະສານສົມທົບປະຕິບັດມາດຕະການຮ່ວມກັນທີ່ຈິງຈັງຫຼາຍຂຶ້ນ ໂດຍຜ່ານການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ມາດຕະການ ໄລຍະສັ້ນ ແລະ ໄລຍະຍາວທີ່ກ່ຽວຂ້ອງ ເປັນຕົ້ນແມ່ນການປ່ຽນແປງໄປສູ່ລະບົບພະລັງງານທີ່ປ່ອຍມົນລະພິດຕໍ່າ ໂດຍຜ່ານການຜະລິດພະລັງງານສະອາດ ແລະ ມາດຕະການໃນການນຳໃຊ້ພະລັງງານຢ່າງມີປະສິດທິພາບ; ຊຸກຍູ້ການມີສ່ວນຮ່ວມຂອງປະຊາຊົນ, ການສະໜອງດ້ານການເງິນ, ການຖ່າຍໂອນເຕັກໂນໂລຊີ ແລະ ການກໍ່ສ້າງຄວາມສາມາດ ໃຫ້ແກ່ປະເທດກຳລັງພັດທະນາ; ສົ່ງເສີມການຮ່ວມມືພາກພື້ນ ແລະ ສາກົນ ລະຫວ່າງ ພັກ, ລັດ, ລັດຖະສະພາ ແລະ ອົງການຈັດຕັ້ງສາກົນ; ສະແດງຄວາມໝາຍໝັ້ນຂອງພັກການເມືອງໃນອາຊີ ໃນການສ້າງແຜນແມ່ບົດຂອງອາຊີເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວໃຫ້ເຫຼືອສູນ ໂດຍສອດຄ່ອງກັບເປົ້າໝາຍຂອງ ສົນທິສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າ

ອາກາດ ໃນການຫຼຸດຜ່ອນການປ່ອຍ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວໃນທົ່ວໂລກ ໃຫ້ເປັນສູນ ພາຍໃນປີ 2050 ແລະ ຈຳກັດການເພີ່ມຂຶ້ນຂອງອຸນຫະພູມສະເລ່ຍຂອງໂລກ ບໍ່ໃຫ້ກາຍ 1,5 ອົງສາເຊ ຂອງລະດັບກ່ອນອຸດສະຫະກຳ.

## 4. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໂອ້ລົມທາງໂທລະສັບກັບທ່ານທູດ ອາແຊັກໄບຊານ




ວັນທີ 7 ທັນວາ 2021, ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໂອ້ລົມທາງໂທລະສັບ ກັບທ່ານ ອານາ ອິມມານອຟ໌, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ອາແຊັກໄບຊານ ປະຈຳ ສປປ ລາວ ທີ່ມີສຳນັກງານຕັ້ງຢູ່ນະຄອນຫຼວງຮ່າໂນ້ຍ, ສສ ຫວຽດນາມ, ເຊິ່ງ ທ່ານ ອານາ ອິມມານອຟ໌ ໄດ້ສະແດງຄວາມຂອບໃຈມາຍັງການນຳຂອງພັກ-ລັດ ສປປ ລາວ ກໍ່ຄື ທ່ານ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ທີ່ໄດ້ໃຫ້ການຮ່ວມມື, ສະໜັບສະໜູນ ແລະ ອຳນວຍຄວາມສະດວກ ຕະຫຼອດໄລຍະການປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ ທີ່ໄດ້ຮັບຜົນສຳເລັດອັນຈົບງາມ ແລະ ການສືບຕໍ່ໃຫ້ການຮ່ວມມືໃນທຸກດ້ານ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ອາແຊັກໄບຊານ-ລາວ ໃຫ້ເກີດດອກອອກຜົນຍິ່ງໆຂຶ້ນ. ຂະນະດຽວກັນ, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດໃນການປະຕິບັດໜ້າທີ່ຂອງທ່ານທູດ ຕະຫຼອດໄລຍະ 7 ປີກວ່າຜ່ານມາ, ຊຶ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງສອງປະເທດ ໃຫ້ມີຄວາມແໜ້ນແຟ້ນຍິ່ງໆຂຶ້ນ, ທັງເຊື່ອໝັ້ນວ່າໃນຕໍ່ໜ້າ ທ່ານທູດ ຈະສືບຕໍ່ສ້າງຄວາມຮັກແພງ ແລະ ປະກອບສ່ວນສະໜັບສະໜູນຕໍ່ ສປປ ລາວ ໃນການຊຸກຍູ້ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ພັກອາແຊັກໄບຊານໃໝ່ ກັບ ພັກ ປປ ລາວ ກໍ່ຄື ສອງປະເທດ ລາວ ແລະ ອາແຊັກໄບຊານ ໃຫ້ເປັນຮູບປະທຳຫຼາຍຂຶ້ນ ເພື່ອຜົນປະໂຫຍດລວມຂອງປະຊາຊົນສອງຊາດ ເພື່ອສັນຕິພາບ, ມິດຕະພາບ ແລະ ການຮ່ວມມືໃນພາກພື້ນ ແລະ ໃນໂລກ.

## 5. ຜົນສຳເລັດກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ II ຂອງອົງຄະນະພັກຄະນະພົວພັນຕ່າງປະເທດສູນກາງພັກ




ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ II ຂອງອົງຄະນະພັກຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດຂຶ້ນໃນວັນທີ 20 ທັນວາ 2021, ທີ່ ຫ້ອງປະຊຸມຫ້ອງວ່າການສູນກາງພັກ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ເປັນກຽດເຂົ້າຮ່ວມ ຂອງ ສະຫາຍ ສະເຫຼີມໄຊ ກົມມະສິດ, ກຳມະການກົມການເມືອງສູນກາງພັກ, ລັດຖະມົນຕີກະຊວງການຕ່າງປະເທດ, ມີບັນດາສະຫາຍຄະນະບໍລິຫານງານພັກ ຄຕພ, ບັນດາສະຫາຍແຂກທີ່ຖືກເຊີນຈາກຄະນະພັກອ້ອມຂ້າງສູນກາງຈຳນວນໜຶ່ງ, ບັນດາສະຫາຍສະມາຊິກພັກອາວຸໂສບຳນານ, ພ້ອມດ້ວຍບັນດາສະຫາຍຕາງໜ້າອົງການຈັດຕັ້ງມະຫາຊົນ ແລະ ບັນດາສະຫາຍສະມາຊິກພັກ ເຂົ້າຮ່ວມທັງໝົດ 82 ສະຫາຍ, ຍິງ 24 ສະຫາຍ.

ກອງປະຊຸມ ໄດ້ເປັນເອກະພາບຮັບຮອງເອົາບົດລາຍງານການເມືອງ, ບົດສຳຫຼວດການນຳພາລວມ ຂອງຄະນະພັກ ຄຕພ ສະໄໝທີ I ແລະ ແຜນພັດທະນາ ຄຕພ ໄລຍະ ແຕ່ປີ 2021-2025. ພ້ອມກັນນັ້ນ, ສະມາຊິກພັກຜູ້ເຂົ້າຮ່ວມໄດ້ພ້ອມກັນໃຊ້ສິດປະຊາທິປະໄຕຂອງຕົນປ່ອນບັດຄັດເລືອກເອົາຄະນະບໍລິຫານງານພັກຄະນະພົວພັນຕ່າງປະເທດສູນກາງພັກ ຊຸດທີ II ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ທັງຖືກຕ້ອງສອດຄ່ອງກັບມາດຖານເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ອອກຮັບສະໝັກເລືອກຕັ້ງທັງໝົດ 09 ສະຫາຍ, ຍິງ 01 ສະຫາຍ ແລະ ໄດ້ເລືອກເອົາ 07 ສະຫາຍ, ຍິງ 01 ສະຫາຍ, ໃນນີ້ກອງປະຊຸມຄັ້ງປະຖົມມະລຶກ ໄດ້ເລືອກເອົາສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ ເປັນເລຂາຄະນະພັກ, ສະຫາຍ ສົມພອນ ສີຈະເລີນ, ເປັນຮອງເລຂາຄະນະພັກ ພ້ອມທັງເປັນປະທານກວດກາພັກ ແລະ ສະຫາຍ ເກີລໍ່ ຢ່າງກໍ ແລະ ສະຫາຍ ວັງຮີ ເນັ່ງມົງວ່າງ ເປັນຮອງປະທານກວດກາ.

# II. ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ ຄຕພ

**1. ຄະນະບໍລິຫານງານຊາວໜຸ່ມ ຄຕພ ມອບເຄື່ອງຊ່ວຍເຫຼືອ ໃຫ້ໂຮງໝໍພາກສະໜາມດົງໂດກ**




ໃນວັນທີ 13 ທັນວາ 2021, ຄະນະຊາວໜຸ່ມ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ມອບເຄື່ອງຊ່ວຍເຫຼືອ ເພື່ອຄວບຄຸມ ແລະ ແກ້ໄຂການແຜ່ລະບາດ ຂອງ ພະຍາດໂຄວິດ-19 ໃຫ້ແກ່ໂຮງໝໍ ພາກສະໜາມ, ມະຫາວິທະຍາໄລແຫ່ງຊາດ ນະຄອນຫຼວງວຽງຈັນ ເພື່ອເປັນການສ້າງ ຂະບວນການຂໍ່ານັບ ຮັບຕ້ອນກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ທັງເປັນການເຄື່ອນໄຫວວຽກງານລວມ ຂອງຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກ ແລະ ການປະກອບສ່ວນຊ່ວຍເຫຼືອສັງຄົມ ກໍ່ຄືໃຫ້ກໍາລັງໃຈແກ່ຜູ້ປະຕິບັດໜ້າທີ່ວຽກງານ ແລະ ຄົນເຈັບທີ່ກໍາລັງປິ່ນປົວຢູ່ໂຮງໝໍພາກສະໜາມ ມະຫາວິທະຍາໄລແຫ່ງຊາດ ແລະ ເຄື່ອງຊ່ວຍເຫຼືອທີ່ມອບໃຫ້ຄັ້ງນີ້ປະກອບມີ: ຜ້າອັດປາກ, ເຈວລ້າງມື ແລະ ນໍ້າດື່ມ ລວມມູນຄ່າ ທັງໝົດ 10.000.000 ກີບ, ເຊິ່ງໄດ້ຮັບຈາກການລະດົມປັດໃຈ ຂອງ ສະມາຊິກຊາວໜຸ່ມ ພາຍໃນ ຄະນະພົວພັນຕ່າງປະເທດສູນກາງພັກ. ຕາງໜ້າກ່າວມອບໂດຍ ທ່ານ ຄໍາເຜື້ອງ ພັນທະໄຊ, ຫົວໜ້າກົມຄົ້ນຄ້ວາ-ສັງລວມ, ກໍາມະການຄະນະບໍລິຫານງານສູນກາງຊາວໜຸ່ມ, ເລຂາຄະນະບໍລິຫານງານຊາວໜຸ່ມຄະນະພົວພັນຕ່າງປະເທດສູນກາງພັກ ແລະ ທ່ານ ພັນປະສິງ ໄຊຍະວົງສາ, ຮອງເລຂາຄະນະບໍລິຫານງານຊາວໜຸ່ມນະຄອນຫຼວງວຽງຈັນ, ທັງເປັນຫົວໜ້າກອງເລຂາໂຮງໝໍພາກສະໜາມດົງໂດກ ເປັນຜູ້ກ່າວຮັບ.